ກະຊວງໂຍທາທິການ
ແລະ ຂົນສົ່ງ
ເລກ ເລກ 2064
ວັນທີ: 21 ກັນຍາ 16

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມອຸຕຸນິຍົມ ແລະ ອຸທົກກະສາດ

0730

ເລກທີ: _____/ກຊສ.ກອຕທ
ນະຄອນຫຼວງວຽງຈັນ, ວັນທີ: 21/09/2016

ບົດລາຍງານສະພາບອາກາດປະຈຳເດືອນ ກັນຍາ 2016 ແລະ ຄາດຄະເນສະພາບອາກາດ ປະຈຳເດືອນ ຕຸລາ-ພະຈິກ-ທັນວາ 2016

1. ສະພາບອາກາດໂດຍທົ່ວໄປປະຈຳເດືອນ ກັນຍາ 2016

ໃນໄລຍະວັນທີ 1 ຫາ 10 ກັນຍາ 2016, ຮ່ອງຄວາມກົດດັນອາກາດຕ່ຳ ຫຼື ຮ່ອງຝົນໄດ້ພາດຜ່ານແຂວງພາກເໜືອ ຫາ ພາກກາງຂອງ ສປປ ລາວ ດ້ວຍກຳລັງປານກາງ ແລະ ສົມທົບກັບກະແສລົມມໍລະສຸມຕາເວັນຕົກສ່ຽງໃຕ້ມີກຳລັງປານກາງພັດປົກຄຸມ, ຊຶ່ງໄດ້ເຮັດໃຫ້ມີຝົນຕົກໃນລະດັບຄ່ອຍ ຫາ ປານກາງຢູ່ທົ່ວໄປ ແລະ ຕົກໜັກພ້ອມມີລົມພັດແຮງຢູ່ບາງທ້ອງຖິ່ນແຂວງພາກກາງເຊັ່ນ: ໃນໄລຍະວັນທີ 6 ຫາ 7 ກັນຍາ ໄດ້ມີຝົນຕົກລົນຕິດຕໍ່ກັນຫຼາຍຊົ່ວໂມງ ເຮັດໃຫ້ມີນ້ຳຖ້ວມອັ່ງຕາມທົ່ງນາ, ໝອງປາ ແລະ ຫົນທາງ ຢູ່ເຂດເມືອງໄຊທານີ ນະຄອນຫຼວງວຽງຈັນ. ນອກຈາກນີ້ສະພາບຝົນຕົກໜັກໄດ້ເຮັດໃຫ້ມີນ້ຳຖ້ວມອັ່ງຢູ່ເຂດບ້ານດອນເພ້ຍ ເມືອງຊຽງຮ່ອນຫົງສາ ແຂວງໄຊຍະບູລີ ໃນວັນທີ່ 10 ກັນຍາ 2016.

ໃນວັນທີ 11 ກັນຍາ ບໍລິເວນຄວາມກົດດັນອາກາດຕ່ຳທີ່ປົກຄຸມຢູ່ເຂດທະເລຈີນໃຕ້ຕອນກາງໄດ້ມີກຳລັງແຮງຂຶ້ນເປັນພາຍຸ ດີເປຣສ໌ຊັນ ແລະ ສືບຕໍ່ເພີ່ມກຳລັງແຮງຂຶ້ນເປັນພາຍຸໝຸນເຂດຮ້ອນ ຣາອີ ຫົວທີ 15 ປະຈຳປີ 2016 ໃນຕອນເຊົ້າຂອງວັນທີ 12 ກັນຍາ ເຄື່ອນທີ່ໄປທາງທິດຕາເວັນຕົກ-ຕາເວັນຕົກສ່ຽງເໜືອດ້ວຍຄວາມໄວ 15 ກິໂລແມັດຕໍ່ຊົ່ວໂມງ ຈາກນັ້ນເຄື່ອນທີຂຶ້ນຝັ່ງ ສສ ຫວຽດນາມ ເຂດແຂວງດານັງໃນຕອນເຊົ້າວັນທີ 13 ກັນຍາ ແລະ ເຄື່ອນທີ່ຜ່ານແຂວງເຊກອງ, ສາລະວັນ ໃນຕອນບ່າຍຂອງວັນດຽວກັນ ແລະ ອ່ອນກຳລັງລົງເປັນພາຍຸດີເປຣສ໌ຊັນເຄື່ອນຜ່ານປະເທດໄທ. ຕະຫຼອດໄລຍະການເຄື່ອນທີພັດຜ່ານຂອງພາຍຸດັ່ງກ່າວ ໄດ້ເກີດມີຝົນຕົກໃນລະດັບປານກາງຫາໜັກພ້ອມມີລົມພັດແຮງຢູ່ເຂດພາກກາງ ແລະ ພາກໃຕ້ ໃນໄລຍະວັນທີ 12 ຫາ 15 ກັນຍາ ແລະ ເກີດມີນ້ຳຖ້ວມອັ່ງ ແລະ ຖ້ວມຍືງຢູ່ຫຼາຍທ້ອງຖິ່ນແຂວງເຊກອງ, ຈຳປາສັກ ແລະ ອັດຕະປື, ພ້ອມດຽວກັນນີ້ ກໍ່ເກີດມີລົມພັດຕົ້ນໄມ້ຫັກລົ້ມທັບປະຊາຊົນຢູ່ເຂດແຂວງສະຫວັນນະເຂດ, ຈາກນັ້ນໄລຍະວັນທີ 16 ຫາ 18 ກັນຍາ, ກະແສລົມຕາເວັນຕົກສ່ຽງໃຕ້ຍັງສືບຕໍ່ພັດປົກຄຸມ ແລະ ໄດ້ເຮັດໃຫ້ມີຝົນຕົກຟ້າຮ້ອງຟ້າເຫຼື້ອມໃນລະດັບຄ່ອຍຢູ່ເກືອບທົ່ວໄປ ແລະ ຕົກປານກາງພ້ອມມີລົມພັດແຮງເປັນບາງໂອກາດຢູ່ບາງທ້ອງຖິ່ນໃນແຕ່ລະພາກ. ໃນໄລຍະວັນທີ 19 ຫາ 30 ກັນຍາ, ມວນອາກາດເຢັນຈາກ ສປ ຈີນ ໄດ້ແຜ່ລົງມາປົກຄຸມເຂດພາກເໜືອຂອງ ສປປ ລາວ ສ່ວນພາກກາງ ແລະ ພາກໃຕ້ຮ່ອງຄວາມກົດດັນອາກາດຕ່ຳພາດຜ່ານ, ເຊິ່ງໄດ້ເຮັດໃຫ້ອາກາດເຢັນ ຫາ ໜາວເຢັນໃນເຂດພາກເໜືອ, ສ່ວນພາກກາງ ແລະ ພາກໃຕ້ໄດ້ມີຝົນຕົກໃນລະດັບຄ່ອຍ ຫາ ປານກາງຢູ່ບາງທ້ອງຖິ່ນ ພ້ອມມີລົມພັດແຮງເປັນບາງໂອກາດ.

1.1. ສະພາບຝົນ

ຕະຫຼອດໄລຍະເດືອນກັນຍາ, ສະພາບຝົນໄດ້ຕົກໃນລະດັບຄ່ອຍ ຫາ ປານກາງເປັນບໍລິເວນກ້ວາງ ແລະ ຕົກໜັກຢູ່ບາງທ້ອງຖິ່ນ ເຊິ່ງຝົນສະເລ່ຍຫຼາຍກ່ວາ 60 ເປີເຊັນໃນແຕ່ລະພາກ. ສຳຫຼັບປະລິມານນ້ຳຝົນລວມຕົວຈິງແຕ່ວັນທີ 1 ຫາ 20 ກັນຍາ 2016 ເຫັນວ່າຍັງມີຫຼາຍທ້ອງຖິ່ນຍັງຫຼຸດເກນປົກກະຕິ ແຕ່ກໍ່ມີບາງທ້ອງຖິ່ນທີ່ມີຝົນຫຼື້ນເກນປົກກະຕິເຊັ່ນ : ຊຽງຂວາງ, ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ສະຫວັນນະເຂດ, ປາກເຊ ແລະ ປາກຊ່ອງ

ເສັ້ນສະແດງປະລິມານນ້ຳຝົນລວມແຕ່ວັນທີ 1 - 20 ກັນຍາ 2016 ສົມທຽບໃສ່ເກນປົກກະຕິຂອງ ເດືອນ ກັນຍາ



ປະລິມານນ້ຳຝົນແຕ່ເດືອນມັງກອນ ມາຮອດວັນທີ 20 ກັນຍາ 2016 ເຫັນວ່າ ຍັງຫຼຸດເກນປົກກະຕິເປັນສ່ວນຫຼາຍ ແຕ່ກໍ່ມີບາງທ້ອງຖິ່ນມີຝົນຫຼື້ນເກນປົກກະຕິເຊັ່ນ : ຊຽງຂວາງ, : ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ນະຄອນຫຼວງວຽງຈັນ, ຫຼັກຊາວ, ປາກເຊ, ສາລະວັນ ແລະ ເຊກອງ.

ເສັ້ນສະແດງປະລິມານນ້ຳຝົນແຕ່ເດືອນມັງກອນ ຫາ ວັນທີ 20 ກັນຍາ 2016 ສົມທຽບໃສ່ເກນປົກກະຕິ



ສະຫຼຸບເປີເຊັນປະລິມານນ້ຳຝົນແຕ່ເດືອນມັງກອນ ຫາ ວັນທີ 20 ກັນຍາ 2016 ມີດັ່ງນີ້ :

ພາກ	ເປີເຊັນ (%)ຝົນຕົກ ແຕ່ວັນທີ 01/01/2016 - 20/09/2016
ພາກເໜືອດ້ານຕາເວັນອອກ	91.0
ພາກເໜືອດ້ານເວັນຕົກ	104.6
ພາກກາງ	90.0
ພາກໃຕ້	92.2
ສະເລ່ຍທົ່ວປະເທດ	94.4

1.2. ການເຝົ້າຕິດຕາມສະພາລະດັບນ້ຳຂອງ ແລະ ສາຂາຕ່າງໆ

ສະພາບນ້ຳຂອງ ແລະ ແມ່ນ້ຳສາຂາ :

ນັບແຕ່ຕົ້ນເດືອນ ກຸມພາ ຫາ ຕົ້ນເດືອນ ມີນາ ສະພາບລະດັບນ້ຳຂອງ ແລະ ນ້ຳສາຂາຢູ່ຕາມແຕ່ລະจุดວັດແທກຕ່າງໆໃນທົ່ວປະເທດໄດ້ມີການເພີ່ງຕົ້ງຂຶ້ນແລະລົງເລັກນ້ອຍ ແລະ ໄດ້ຫຼຸດລົງຕ່ຳຕາມລະດັບປົກກະຕິຂອງສະພາບລະດັບນ້ຳໃນລະດູແລ້ງ.

ສະພາບນ້ຳຂອງ:

ອີງຕາມການເກັບກຳຂໍ້ມູນລະດັບນ້ຳຕົວຈິງໃນໄລຍະ 1 ເດືອນຜ່ານມາ, ແຕ່ວັນທີ 20 ສິງຫາ ຫາ 20 ກັນຍາ 2016, ລະດັບນ້ຳຂອງຢູ່ຕາມສະຖານີວັດແທກຕ່າງໆແມ່ນໄດ້ຄ່ອຍໆເພີ່ງຕົ້ງເພີ້ມຂຶ້ນເລັກນ້ອຍ, ຊຶ່ງສັງເກດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 1. ລະດັບນ້ຳຕາມລຳແມ່ນ້ຳຂອງສູງສຸດ ແລະ ຕ່ຳສຸດໃນ 1 ເດືອນຜ່ານມາ ແລະ ລະດັບນ້ຳໃນປະຈຸບັນ

ລ/ດ	ຊື່ສະຖານີ	ເຂດ ລະວັງໄພ (ແມັດ)	ເຂດ ອັນຕະລາຍ (ແມັດ)	ລະດັບນ້ຳສູງສຸດໃນ 1 ເດືອນຜ່ານມາ (ແມັດ)	ລະດັບນ້ຳຕ່ຳສຸດໃນ 1 ເດືອນຜ່ານມາ (ແມັດ)	ລະດັບນ້ຳປະຈຸບັນ (20/09/2016) (ແມັດ)
1	ນ້ຳຂອງ, ຫ້ວຍຊາຍ	15.00	16.00	6.50	3.78	4.54
1	ນ້ຳຂອງ, ປາກແບງ	29.00	30.00	16.63	13.14	13.76
2	ນ້ຳຂອງ, ຫຼວງພະບາງ	17.50	18.50	15.76	9.28	9.28
3	ນ້ຳຂອງ, ວຽງຈັນ	11.50	12.50	11.00	6.28	7.50
4	ນ້ຳຂອງ, ປາກຊັນ	13.50	14.50	12.67	9.09	9.27
5	ນ້ຳຂອງ, ທ່າແຂກ	13.00	14.00	11.25	9.65	9.65
6	ນ້ຳຂອງ, ສະຫວັນນະເຂດ	12.00	13.00	9.37	8.07	8.07

7	ນ້ຳຂອງ, ປາກເຊ	11.00	12.00	10.02	7.81	8.82

2. ການຄາດຄະເນສະພາບອາກາດສຳຫຼັບເດືອນ ຕຸລາ-ພະຈິກ-ທັນວາ 2016

<u>ຄາດຄະເນສະພາບອາກາດເດືອນ ຕຸລາ 2016:</u> ຮ່ອງຄວາມກົດດັນອາກາດຕ່ຳ ຫຼື ຮ່ອງຝົນຈະເຄື່ອນລົງມາພາດຜ່ານເຂດພາກກາງ ແລະ ພາກໃຕ້ຂອງ ສປປ ລາວ ປ່ອງເຂົ້າໃສ່ພາຍຸໝຸນເຂດຮ້ອນທີ່ກໍ່ຕົວຢູ່ເຂດທະເລຈີນໃຕ້ ພ້ອມດຽວກັນ ບໍລິເວນຄວາມກົດດັນອາກາດສູງຈາກ ສປ ຈີນ ຈະແຜ່ລົງມາປົກຄຸມເຂດພາກເໜືອ. ເຊິ່ງຈະເຮັດໃຫ້ພາກເໜືອມີອາກາດເຢັນ ຫາ ໜາວເຢັນ ແລະ ຈະມີຝົນຕົກຫຼຸດລົງ ເຊິ່ງປະລິມານນ້ຳຝົນຈະຫຼຸດເກນປົກກະຕິເປັນສ່ວນຫຼາຍໃນເຂດພາກເໜືອ. ສຳຫຼັບພາກກາງ ແລະ ພາກໃຕ້ຍັງຈະມີຝົນຕົກຟ້າຮ້ອງຟ້າເຫຼື້ອມຕົ້ມອີກ ໂດຍສະເພາະໄລຍະອາທິດທີ 2 ຫາ ອາທິດ ທີ 3 ຂອງເດືອນ ຈະມີຝົນຕົກຫຼາຍຂຶ້ນ. ເຊິ່ງປະລິມານນ້ຳຝົນໃນເຂດພາກກາງ ແລະ ພາກໃຕ້ຈະຫຼົ້ນເກນປົກກະຕິ.

<u>ຄາດຄະເນສະພາບອາກາດເດືອນ ພະຈິກ 2016:</u> ມວນອາກາດໜາວເຢັນຈາກ ສປ ຈີນ ຈະມີກຳລັງແຮງເພີ່ມຂຶ້ນແຜ່ລົງມາປົກຄຸມເຂດພາກເໜືອລົງຫາພາກກາງຂອງ ສປປ ລາວ, ສ່ວນພາກໃຕ້ ກະແສລົມຕາເວັນຕົກສ່ຽງໃຕ້ຍັງຈະສືບຕໍ່ປົກຄຸມ. ເຊິ່ງຈະເຮັດໃຫ້ພາກໃຕ້ຍັງມີຝົນຕົກໃນລະດັບຄ່ອຍຢູ່ບາງທ້ອງຖິ່ນໃນໄລຍະກາງເດືອນພະຈິກນີ້ເຊິ່ງປະລິມານນ້ຳຝົນຈະຫຼົ້ນເກນປົກກະຕິເປັນສ່ວນໃຫຍ່ໃນເຂດພາກໃຕ້. ສ່ວນພາກເໜືອ ແລະ ພາກກາງ ອາກາດຈະເຢັນ ຫາ ໜາວເຢັນ ພ້ອມມີໝອກໜາປົກຫຸ້ມໃນຕອນເຊົ້າຢູ່ເຂດຮ່ອມພູ, ເຂດພູສູງ ແລະ ຈະມີຝົນຕົກໃນລະດັບຄ່ອຍພຽງເລັກນ້ອຍ. ປະລິມານນ້ຳຝົນຈະຫຼຸດເກນປົກກະຕິໃນເຂດພາກເໜືອ ແລະ ພາກກາງ.

<u>ຄາດຄະເນສະພາບອາກາດເດືອນ ທັນວາ 2016 :</u> ພາກເໜືອ, ເຂດໄຊສົມບູນ ແລະ ເຂດພູພຽງບໍລະເວນ ອາກາດຈະໜາວເຢັນຫຼາຍ ພ້ອມມີໝອກໜາປົກຫຸ້ມຢູ່ທົ່ວໄປໃນຕອນກາງຄືນຫາຕອນເຊົ້າ. ສ່ວນພາກກາງ ແລະ ພາກໃຕ້ອາກາດຈະໜາວເຢັນ ພ້ອມມີໝອກບາງປົກຫຸ້ມຢູ່ທົ່ວໄປ. ປະລິມານນ້ຳຝົນຈະຫຼຸດເກນປົກກະຕິເປັນສ່ວນຫຼາຍຢູ່ບັນດາແຂວງພາກເໜືອ ແລະ ພາກກາງ, ສ່ວນພາກໃຕ້ຝົນຈະຕົກໃນເກນປົກກະຕິ ຫຼື ຫຼົ້ນເກນປົກກະຕິເລັກນ້ອຍ.

3. ຄຳເຕືອນ

ການສິ້ນສຸດລະດູຝົນກ່ອນກຳນົດຢູ່ບັນດາແຂວງພາກເໜືອ: ເນື່ອງຈາກມວນອາກາດເຢັນຈາກ ສປ ຈີນ ຈະແຜ່ລົງມາປົກຄຸມເຂດພາກເໜືອໃນໄລຍະຕົ້ນເດືອນຕຸລາເປັນຕົ້ນໄປ ເຊິ່ງຈະເຮັດໃຫ້ມີຝົນຕົກຫຼຸດລົງຢູ່ບັນດາແຂວງພາກເໜືອ ແລະ ຫຼຸດເກນປົກກະຕິເປັນສ່ວນຫຼາຍ, ພ້ອມດຽວກັນ ສະພາບລະດູຝົນຈະສິ້ນສຸດໃນໄລຍະອາທິດທຳອິດຂອງເດືອນຕຸລາຢູ່ບັນດາແຂວງພາກເໜືອ. ສະນັ້ນ, ຈຶ່ງຂໍແຈ້ງເຕືອນເຖິງພໍ່ແມ່ປະຊາຊົນ, ອຳນາດການປົກຄອງ ແລະ ອົງການຈັດຕັ້ງຕ່າງໆ ຈົ່ງກຽມພ້ອມຮັບມື ແລະ ວາງມາດຕະການໃນການກັກເກັບນ້ຳໄວ້ໃຫ້ພຽງພໍ.

ເວົ້າລະວັງສະພາບພາຍຸໝຸນເຂດຮ້ອນ: ມາຮອດປະຈຸບັນ, ພາຍຸໝຸນເຂດຮ້ອນທີ່ກໍ່ຕົວຢູ່ເຂດດ້ານຕາເວັນຕົກມະຫາສະໝຸດປາຊີຟິກຕອນເໜືອ ມີທັງໝົດ 16 ຫົວ ເຊິ່ງເກນປົກກະຕິແມ່ນ 25 ຫາ 27 ຫົວຕໍ່ປີ, ສະນັ້ນ ສະພາບພາຍຸຍັງຈະກໍ່ຕົວຂຶ້ນຕົ້ມອີກໃນເຂດດັ່ງກ່າວ ໂດຍສະເພາະຢູ່ເຂດທະເລຈີນໃຕ້ ຈາກນັ້ນກໍ່ຈະເຄື່ອນທີເຂົ້າຝັ່ງ ພາກກາງຂອງ ສສ ຫວຽດນາມ ແລະ ເຄື່ອນຜ່ານພາກໃຕ້ຂອງ ສປປ ລາວ ໃນໄລຍະເດືອນຕຸລາ ຫາ ພະຈິກນີ້. ສະນັ້ນ, ຈຶ່ງຂໍແຈ້ງເຕືອນເຖິງພໍ່ແມ່ປະຊາຊົນ, ອຳນາດການປົກຄອງ ແລະ ອົງການຈັດຕັ້ງທຸກພາກສ່ວນ ຈົ່ງມີສະຕິ ແລະ ວາງແຜນຮັບມືກັບສະພາບຝົນຕົກໜັກ, ລົມພັດແຮງຈາກສະພາບຂອງພາຍຸທີ່ອາດຈະເກີດຂຶ້ນໃນໄລຍະດັ່ງກ່າວ.

ຫົວໜ້າກົມ

ຂັນມະນີ ຂຸນພົນ